# ລູກາ

ໃຈຄວາມສຳຄັນ  ບຸດມະນຸດ ໑໙:໑໐

ຈຳນວນບົດ  ໒໔ ບົດ

ທ່ານລູກາຜູ້ແຕ່ງໜັງສືນີ້ເປັນນັກປວັດສາດແລະເປັນນາຍໝໍ ເພິ່ນເປັນຄົນຊາດເຮເລັນ (ຫລືຄົນຕ່າງຊາດ) ໃນບັນດາຄົນທີ່ແຕ່ງພຣະຄັມພີນັ້ນ ແມ່ນທ່ານລູກາຜູ້ດຽວທີ່ບໍ່ໄດ້ເປັນຊາດຢູດາ ທ່ານລູກາໄດ້ເປັນເພື່ອນເດີນທາງໄປມາດ້ວຍກັນກັບທ່ານໂປໂລ ເມື່ອເວລາທ່ານໂປໂລຖືກຈັບ ກໍແມ່ນທ່ານລູກາເປັນຜູ້ອຸປຖາກ

ອັນນຶ່ງ ທ່ານລູກາເປັນນັກປວັດສາດທີ່ເອົາໃຈໃສ່ໃນເຫດການຕ່າງໆ ເປັນຢ່າງດີ ເຊັ່ນເພິ່ນໄດ້ຂຽນບອກສໄມທີ່ໂຢຮັນບັບຕິໂຕເກີດ (໑:໕) ບອກຣະຍະເວລາທີ່ພຣະເຢຊູຊົງປະສູດ (໒:໑–໗) ບອກສໄມທີ່ໂຢຮັນບັບຕິໂຕເຣີ່ມປ່າວປະກາດ (໓:໑–໒) ແລະແມ່ນທ່ານລູກາຜູ້ດຽວທີ່ບອກວ່າ ພຣະເຢຊູຊົງປ່າວປະກາດຂ່າວປະເສີດເມື່ອອາຍຸ ໓໐ ປີ (໓:໒໓)

## ວ່າດ້ວຍຜູ້ຮັບໜັງສື

ທ່ານມາຣະໂກໄດ້ແຕ່ງຂ່າວປະເສີດສຳລັບພວກໂຣມ ແລະທ່ານມັດທາຍໄດ້ແຕ່ງສຳລັບພວກຢູດາ ສ່ວນທ່ານລູກາກໍໄດ້ແຕ່ງສຳລັບພວກເຮເລັນ ສມັ້ນຂ່າວປະເສີດຂອງສາມຄົນນີ້ຈຶ່ງມີໄປເຖິງມະນຸດທົ່ວໄປ ເພາະໃນສໄມນັ້ນຍັງຖືວ່າຄົນສາມຊາດນີ້ຄືມະນຸສໂລກທັງໝົດ

ສ່ວນທ່ານເທໂອຟີເລຜູ້ຮັບໜັງສືນີ້ (໑:໓) ກໍບໍ່ຮູ້ແນ່ນອນວ່າເປັນຄົນຊາດໃດ ແຕ່ພວກນັກປາດບາງຄົນໃນສະໄໝນັ້ນເຂົ້າໃຈວ່າເພິ່ນເປັນຊາວເຣເລັນ

## ວ່າດ້ວຍຄວາມມຸ່ງໝາຍ

ໃນຄຳນຳ (໑:໑–໔) ທ່ານລູກາກໍບອກວ່າ "ເພື່ອໃຫ້ຜູ້ທີ່ຮ່ຳຮຽນເຣື່ອງພຣະເຢຊູມາແລ້ວເຂົ້າໃຈຍິ່ງຂຶ້ນ" ສນັ້ນເພິ່ນຈຶ່ງໄດ້ສືບສວນຖ້ວນຖີ່ເຣື່ອງຕ່າງໆ ໃຫ້ແນ່ນອນຍິ່ງຂຶ້ນ

ທ່ານລູກາຕ້ອງການຢາກໃຫ້ຄົນທັງປວງເຂົ້າໃຈວ່າ ພຣະເຢຊູເປັນພຣະບຸດຂອງພຣະເຈົ້າທີ່ສະເດັດມາຍັງໂລກ ເພື່ອຊ່ອຍມະນຸສໂລກໃຫ້ພົ້ນຈາກບາບກັມ ແລະເພິ່ນຍັງບອກວ່າ ພຣະເຢຊູບໍ່ແມ່ນຈະຊ່ອຍແຕ່ພວກຢູດາເທົ່ານັ້ນ ແຕ່ຈະຊ່ອຍມະນຸສໂລກທັງໝົດ

## ວ່າດ້ວຍເນື້ອຄວາມ

### ໑. ເປັນຂ່າວປະເສີດສຳລັບຄົນທົ່ວໂລກ

ພຣະວິນຍານບໍຣິສຸດຈຶ່ງເລືອກເອົາທ່ານລູກາ ຜູ້ເປັນຄົນຕ່າງປະເທດ ເພື່ອແຈ້ງພຣະຄຸນຂອງພຣະເຈົ້າແກ່ຄົນທັງປວງ (໔:໓໑-໓໔; ໓:໖; ໔໔:໔໗) ສະນັ້ນທ່ານລູກາຈຶ່ງບໍ່ໄດ້ຈົດຂໍ້ຄວາມທີ່ພຣະເຢຊູຊົງສັ່ງວ່າ "ຢ່າໄປຕາມພວກຕ່າງປະເທດ" ມັດທາຍ ໑໐:໕

ຍັງມີເຣື່ອງຕ່າງໆ ອີກຫລາຍເຣື່ອງຄື :

– ສາວົກ ໗໐ ຄົນໄດ້ຮັບໃຊ້ໄປປ່າວປະກາດຂ່າວປະເສີດ ໑໐:໑

– ຄວາມເຊື່ອຂອງນາຍທະຫານຊາວໂຣມ ໗:໙

– ເຣື່ອງຄວາມທຸກໃຈຂອງຊາວຊະມາເຣັຍ (໑໐:໙) ເຣື່ອງນີ້ ພຣະອົງຊົງມີພຣະປະສົງຢາກຍອມໃຫ້ພວກຢູດາຖືວ່າ ທຸກຄົນເປັນເພື່ອນບ້ານດຽວກັນ

– ເຣື່ອງທີ່ຊາວຊະມາເຣັຍບໍ່ຍອມຮັບຕ້ອນພຣະອົງ ໙:໕໑–໕໖

– ຄວາມເຫັນຂອງພຣະອົງກ່ຽວກັບເມືອງຕີໂຣ ເມືອງຊີໂດນ (໑໐:໑໔) ແລະເມືອງນີນີເວ ໑໑:໓໒

## ໒. ເປັນຂ່າວປະເສີດແຫ່ງພຣະຄຸນຂອງພຣະເຈົ້າ

ທ່ານມັດທາຍ ໄດ້ສະແດງຂ່າວປະເສີດ ເຣື່ອງອານາຈັກຂອງພຣະເຈົ້າ ແຕ່ສຳລັບທ່ານລູກາໄດ້ສະແດງຂ່າວປະເສີດແຫ່ງພຣະຄຸນຂອງພຣະເຈົ້າ ຄືພຣະຄຸນທີ່ພຣະອົງຊົງໂຜດປະທານແກ່ມະນຸດທັງປວງນັ້ນ ມີເຣື່ອງຕ່າງໆ ທີ່ເປັນຫລັກຖານພະຍານກ່ຽວກັບເຣື່ອງນີ້ ;

– ພຣະເຢຊູຊົງໃຫ້ອະໄພໂທດແກ່ຍິງຄົນຊົ່ວ ບົດ ໗:໓໖–໕໐

– ພຣະເຢຊູຊົງເລົ່າເຣື່ອງເຊີນຄົນທຸກຍາກມາຮ່ວມຮັບປະທານອາຫານ ໑໔:໑໕–໒໔

– ພຣະອົງຊົງເລົ່າເຣື່ອງຊອກຫາແກະແລະເງິນທີ່ສູນເສັຍໄປ ບົດ ໑໕:໓–໑໐

– ພຣະອົງຊົງເລົ່າເຣື່ອງລູກຜູ້ບໍ່ຟັງຄວາມພໍ່ ບົດ ໑໕:໑໑–໓໒

– ພຣະອົງຊົງໃຫ້ອະໄພໂທດແກ່ຄົນເກັບພາສີ ບົດ ໑໘:໑໐–໑໔

– ພຣະອົງຊົງປະກາດຄວາມພົ້ນແກ່ຊັກຄາຍ ບົດ ໑໙:໑–໑໐

– ພຣະອົງຊົງໄຂປະຕູສວັນໃຫ້ແກ່ນັກໂທດ ບົດ ໒໓:໓໙–໔໓

## ໓. ເປັນຂ່າວປະເສີດທີ່ລອດພົ້ນດ້ວຍຄວາມເຊື່ອ

ທ່ານລູກາໄດ້ສອນວ່າ "ມະນຸດຈະລອດພົ້ນດ້ວຍຄວາມເຊື່ອ" ແລະທ່ານ ໂປໂລ ຜູ້ເປັນ ຄຣູສອນ ຂອງທ່ານລູກາ ກໍໄດ້ສອນ ຢ່າງດຽວກັນ (ເອເຟດ ໒:໘) ຄື:

– ເລື່ອງຄົນເປັນງ່ອຍ ບົດ ໕:໒໐

– ເລື່ອງນາຍທະຫານ ບົດ ໗:໗–໙

– ເລື່ອງຍິງຊົ່ວ ບົດ ໗:໕໐

– ເລື່ອງຍິງເປັນພະຍາດເລືອດຕົກ ບົດ ໘:໔໘

– ເລື່ອງຄົນຂີ້ທູດ ບົດ ໑໗:໑໙

## ໔. ເປັນຂ່າວປະເສີດສະແດງສະພາບຂອງພຣະເຢຊູ

ກ. ຄຳວ່າ "ບຸດມະນຸດ" ໃນໜັງສືເຫຼັ້ມນີ້ມີຢູ່ປະມານ ໒໕ ເທື່ອ ໃນພຣະຄັມພີພຣະເຢຊູຊົງປາກົດເປັນສອງຢ່າງຄື: ຊົງເປັນພຣະເຈົ້າແລະຊົງເປັນມະນຸດ ຄືໝາຍຄວາມວ່າພຣະເຢຊູຊົງເປັນພຣະເຈົ້າ ແຕ່ຍັງເປັນມະນຸດຢູ່

ຂ. ທ່ານລູກາໄດ້ຈົດເຊື້ອສາຍຂອງພຣະເຢຊູໄວ້ຫລາຍກວ່າທ່ານມັດທາຍ ຄືໄດ້ຈົດໄວ້ຕັ້ງແຕ່ສໄມອາດາມຜູ້ເປັນພໍ່ເດີມຂອງ

ມະນຸດ    ສ່ວນທ່ານມັດທາຍໄດ້ຈົດໄວ້ພຽງລໃນຂອງທ່ານ
ອັບລາຮາມເທົ່ານັ້ນ  ໓:໒໓-໓໘

ຄ. ທ່ານລູກາຜູ້ດຽວໄດ້ຈົດເຣື່ອງກ່ຽວກັບນາງມາຣີ ເຣື່ອງຍາດພີ່ນ້ອງຝ່າຍເນື້ອໜັງຂອງພຣະອົງ    ເຣື່ອງການປະສູດຂອງພຣະອົງ    ແລະເຣື່ອງເມື່ອພຣະອົງຍັງຢູ່ໃນປະຖົມໄວ ບົດ ໑-໒

ງ. ທ່ານລູກາຍັງໄດ້ສະແດງຄວາມເມດຕາຂອງພຣະອົງທີ່ມີຕໍ່ຄົນທຸກຍາກແລະຄົນທັງຫລາຍທີ່ໄຮ້ຍົດສັກ    ໗:໓໗; ໘:໒; ໑໖:໒໐-໒໑; ໑໗:໑໒; ໒໓:໔໓

ຈ. ທ່ານລູກາໄດ້ຈົດເຣື່ອງພຣະເຢຊູສະເດັດໄປອ້ອນວອນໄວ້ໃນໜັງສືເຖິງ ໑໒ ເທື່ອ    ໓:໒໑; ໔:໑; ໕:໑໖; ໖:໑໒; ໙:໑໐; ໑໖:໒໘; ໑໑:໑; ໒໒:໑໙, ໓໒,໔໑; ໒໓:໓໔: ໔໖; ໒໔:໓໐

## ເຣື່ອງທີ່ເປັນມີຢູ່ແຕ່ໃນໜັງສືລູກາເທົ່ານັ້ນຄື: ການອັສຈັນ

| | |
|---|---|
| – ພຣະເຢຊູຊົງລົງເຮືອໄປຫາປາ | ບົດ ໕:໑-໑໑ |
| – ຊົງບອກໃຫ້ຄົນຕາຍເປັນຂຶ້ນມາອີກ | ບົດ ໗:໑໑-໑໗ |
| – ຊົງໂຜດໃຫ້ຄົນຫລັງກ່ອມດີເປັນປົກກະຕິ | ບົດ ໑໓:໑໐-໑໗ |
| – ຊົງໂຜດໃຫ້ຄົນທ້ອງມານດີເປັນປົກກະຕິ | ບົດ ໑໔:໑-໖ |
| – ຊົງປິ່ນປົວຄົນຂີ້ທູດ ໑໐ ຄົນ | ບົດ ໑໗:໑໑-໑໙ |
| – ຊົງໂຜດໃຫ້ມາຣະໂກດີເຈັບ | ບົດ ໒໒:໔໙-໕໑ |

## ຄຳອຸປມາ

- ວ່າດ້ວຍລູກໜີ້ສອງຄົນ — ບົດ ໗:໔໐-໔໓
- ວ່າດ້ວຍຊາວຊະມາເຣັຍ — ບົດ ໑໐:໓໐–໓໗
- ວ່າດ້ວຍເພື່ອນມາຫາເວລາທ່ຽງຄືນ — ບົດ ໑໑:໕–໘
- ວ່າດ້ວຍຄົນຮັ່ງມີບໍ່ມີປັນຍາ — ບົດ ໑໒:໑໖-໒໑

## ຄຳອຸປມາຕໍ່ :

ວ່າດ້ວຍກົກໝາກເດື່ອເທດ — ບົດ ໑໓:໖–໙

ວ່າດ້ວຍການຈັດງານກິນລ້ຽງ — ບົດ ໑໔:໑໖-໒໔

ວ່າດ້ວຍຍິງທີ່ສູນເສັຍເງິນ — ບົດ ໑໕:໘–໑໐

ວ່າດ້ວຍລູກຊາຍທີ່ໜີຈາກພໍ່ແມ່ — ບົດ ໑໕:໑໑–໓໒

ວ່າດ້ວຍຄົນຮັ່ງມີກັບລາຊະໂລ — ບົດ ໑໖:໑໙–໓໑

ວ່າດ້ວຍຄົນໃຊ້ — ບົດ ໑໗:໗–໑໐

ວ່າດ້ວຍຜູ້ພິພາກສາທີ່ບໍ່ຊອບທັມ — ບົດ ໑໘:໑–໘

ວ່າດ້ວຍຄົນຟາຣີຊຽນກັບຄົນເກັບພາສີ — ບົດ ໑໘:໙–໑໔

ວ່າດ້ວຍຜູ້ໃຫຍ່ຝາກເງິນໄວ້ກັບຄົນໃຊ້ — ບົດ ໑໙:໑໒–໒໗

## ການແບ່ງເປັນພາກ

ຄຳນຳ — ບົດ ໑:໑–໔

### ພາກທີ ໑

ວ່າດ້ວຍເຣື່ອງໂຍຮັນບັບຕິໂຕຜູ້ມາກ່ອນພຣະເຢຊູ

ບົດ ໑:໕–໒໕; ໕໗–໘໐

ບົດ ໓:໑–໒໐

ເຣື່ອງປະສູດຂອງພຣະອົງ ບົດ ໑:໒໖–໕໖; ໒:໑–໓໘

ເມື່ອພຣະອົງຊົງຍັງຢູ່ໃນປະຖົມໄວ ບົດ ໒:໔໐–໕໒

ເຣື່ອງພຣະອົງຮັບສິນບັບເຕມາ ບົດ ໓:໒໑–໒໒

ເຊື້ອວົງຂອງພຣະອົງ ບົດ ໓:໒໓–໓໘

ເມື່ອພຣະອົງຊົງຖືກທົດລອງ ບົດ ໔:໑–໑໓

## ພາກທີ ໒ ວ່າດ້ວຍກິຈການຂອງພຣະອົງຄື:

ກ. ຢູ່ແຂວງຄາລີເລ ບົດ ໔:໑໔–໙:໕໐

– ກ່ອນພຣະອົງຊົງເລືອກ ໑໒ ຄົນ ບົດ ໔:໑໔–໖:໑໑

– ຊົງເລືອກເອົາພວກ ໑໒ ຄົນ ບົດ ໖:໑໒–໘:໕໖

– ຊົງໃຜດປະທານອຳນາດແກ່ສາວົກ ໑໒ ຄົນ
ໃຫ້ໄປປ່າວປະກາດຂ່າວປະເສີດ ບົດ ໙:໑–໕

ຂ. ເວລາເດີນທາງໄປເມືອງເຢຣູຊາເລັມ ບົດ ໙:໕໑–໑໙:໒໘

– ພຣະເຢຊູກັບພັກພວກຂອງພຣະອົງ ບົດ ໙:໕໑–໑໑:໑໓

– ພຣະເຢຊູກັບພວກສັດຕູ ບົດ ໑໑:໑໔–໑໓:໒໑

– ພຣະເຢຊູກັບພວກທີ່ບໍ່ເຊື່ອ ບົດ ໑໓:໒໒–໑໕:໓໒

– ຄວາມຄິດຂອງພຣະອົງກ່ຽວກັບຊັບສົມບັດ
ບົດ ໑໖:໑–໑໙:໒໘

## ພາກທີ ໙ ວ່າດ້ວຍຄວາມຕາຍແລະການຄືນມາຈາກຕາຍຂອງພຣະອົງ:

- ຄຳເທສນາຄັ້ງສຸດທ້າຍຂອງພຣະອົງ ບົດ ໑໘:໒໘–໒໑:໓໗
- ວາຣະສຸດທ້າຍຂອງພຣະເຢຊູ ບົດ ໒໒–໒໓:໕໖
- ການປາກົດຕົວຂອງພຣະເຢຊູ ຫລັງຈາກສິ້ນພຣະຊົນ ບົດ ໒໔:໑–໕໓